# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 26 ພຶສຈິກາ 2023 (11-26-2023)

---

## ພຣະເຈົ້າສົມຄວນໄດ້ຮັບຄຳຂອບໃຈຈາກພວກເຮົາ

**ຈຸດສຳຄັນໃນບົດຮຽນ.** ພວກເຮົາມີຫຼາຍສິ່ງຫຼາຍຢ່າງທີ່ຕ້ອງຂອບພຣະຄຸນພຣະເຈົ້າ.

**ພຣະຄັມພີຕອບສນອງຊີວິດ.**

ພໍ່ແມ່ຖາມພວກລູກຫຼາຍໆຄຳຖາມໃນຊ່ວງຊີວິດຂອງພວກເຂົາ. ການໄຕ່ສວນເປັນຈຳນວນຫຼາຍຄັ້ງບໍ່ແມ່ນຢາກໄດ້ຂໍ້ມູນທີ່ບໍ່ຮູ້ແຕ່ເປັນການເພື່ອເຕືອນສະຕິໃຫ້ເຮັດໃນສິ່ງທີ່ຖືກຕ້ອງ. ຈາກຄຳຖາມທັງໝົດທີ່ພໍ່ແມ່ມັກຖາມ, ມີຄຳຖາມນຶ່ງເບິ່ງຄືວ່າມັນພຸ່ງຂຶ້ນເທິງໝູ່: ເຈົ້າເວົ້າຫັຍງ? ພວກເຮົາບອກຕອນພວກເຮົາມອບອາຫານໃຫ້ທີ່ໂຕະ. ພວກເຮົາບອກເມື່ອມີບາງຄົນເອົາຂອງຂວັນໃຫ້ພວກເຂົາໃນງານລ້ຽງວັນເກີດ. ພວກເຮົາຍັງໃຊ້ຮ້ອງຂໍກັບພວກເຂົາເມື່ອສະມາຊິກຄົນນຶ່ງຂອງຄອບຄົວສເນີບາງຢ່າງທີ່ພວກເຮົາຮູ້ວ່າພວກເຂົາຈະບໍ່ມັກ. ເຖິງແມ່ນຈະປ່ຽນສຳນຽງຂອງສຽງທີ່ພວກເຮົາໃຊ້ເປັນປົກກະຕິ. ມັນຍັງເປັນການກະຕຸ້ນໃຫ້ລູກເກີດມີຄວາມກະຕັນຍູ. ພວກເຮົາຕ້ອງການເຮັດໃຫ້ມັນເປັນນິສັຍທີ່ຈະເວົ້າເປັນປໂຍກງ່າຍໆແຕ່ສຳຄັນຄື, "ຂອບໃຈ." ທີ່ຈະເຮັດໃຫ້ເຂົາເວົ້າມັນກໍເປັນອີກເຣື່ອງນຶ່ງ. ມັນເປັນອີກຢ່າງນຶ່ງທີ່ເກີດຂຶ້ນຢ່າງອັດຕະໂນມັດຈາກພວກເຂົາເອງ. ແລະມັນກໍຈິງສຳລັບພວກເຮົາທຸກຄົນດ້ວຍ. ພຣະເຈົ້າໄດ້ຖອກເທພຣະພອນຫຼາຍຢ່າງທີ່ກຳລັງຊ່ວຍຊຸກຍູ້ຈິດວິນຍານຂອງພວກເຮົາ. ພວກເຮົາອາດໄດ້ຍິນຂອງຂວັນເຫຼົ່ານີ້ຖາມພວກເຮົາວ່າ "ເຈົ້າເວົ້າຫັຍງ?"ພຣະເຈົ້າສົມຄວນໄດ້ຮັບຄວາມຂອບໃຈຈາກພວກເຮົາ. ພວກເຮົາບໍ່ຄວນຮຽກຮ້ອງຕໍ່ໄປອີກ, ດາວິດໄດ້ສະແດງໃຫ້ພວກເຮົາເຫັນຫຼາຍຢ່າງໃນບົດເພງສັນລະເສີນ 65 ໃນຂນະທີ່ພວກເຮົາສຶກສາເຣື່ອງນີ້ຮ່ວມກັນ. ການຕອບສນອງທີ່ເປັນທັມມະຊາດຂອງພວກເຮົາຄວນເປັນຄວາມກະຕັນຍູ.

*ພໍ່ແມ່ຂອງທ່ານໄດ້ພຍາຍາມປູກຝັງນິສັຍອັນດີອັນໃດແດ່ໃຫ້ກັບທ່ານ?*

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

### 1. ເພງສັນລະເສີນ 65:1-4

*1. ໂອພຣະເຈົ້າຂ້າ ປະຊາຊົນຕ້ອງສັນລະເສີນພຣະອົງທີ່ເມືອງຊີໂອນ ແລະຖວາຍສິ່ງທີ່ເຂົາເຈົ້າສັນຍາໄວ້ກັບພຣະອົງ. 2. ກໍຍ້ອນ*
*ພຣະອົງຊົງຕອບຄຳອ້ອນວອນທັງຫຼາຍຂອງເຂົາເຈົ້າ ທຸກໆຄົນຈະຕ້ອງມາຫາພຣະອົງ. 3. ເພາະເຫດຄວາມບາບຂອງເຂົາເຈົ້າ ຍ້ອນ*
*ຄວາມຜິດຂອງພວກຂ້ານ້ອຍ ພວກຂ້ານ້ອຍຈຶ່ງພ່າຍແພ້ ແຕ່ພຣະອົງຊົງໃຫ້ອະພັຍບາບນັ້ນ. 4. ຄວາມສຸກເປັນຂອງຜູ້ທີ່ພຣະອົງຊົງ*
*ເລືອກໄວ້ ຄືຜູ້ທີ່ພຣະອົງຊົງນຳເຂົາເຈົ້າເຂົ້າມາໃນສະຖານທີ່ສັກສິດ ພວກຂ້ານ້ອຍຈະອີ່ມບໍລິບູນດ້ວຍພຣະພອນ ແລະຂອງດີທີ່ພຣະວິຫານສັກສິດຂອງພຣະອົງ.*

ຂນະທີ່ດາວິດໄດ້ເລີ້ມຕົ້ນບົດເພງສັນລະເສີນແຫ່ງການຂອບພຣະຄຸນ, ທ່ານໄດ້ແນະນຳແນວຄວາມຄິດທີ່ເປັນປໂຍດກ່ຽວກັບການນະມັສການ. ຖ້າວ່າການສັນລະເສີນເປັນຂອງທີ່ໃດກໍໄດ້, ມັນເປັນຂອງພຣະເຈົ້າ, ບໍ່ມີໃຜອີກຄວນໄດ້ຮັບການນະມັສການຂອງພວກເຮົາ. ຂນະພວກເຮົາໄດ້ຂອບຄຸນພຣະເຈົ້າສຳລັບສິ່ງທີ່ພຣະອົງໄດ້ຊົງກະທຳ, ມັນເປັນການເໝາະສົມຫຼາຍທີ່ຈະເຮັດແນວນັ້ນ. ພຣະອົງໄດ້ກະທຳຫຼາຍຢ່າງເພື່ອໃຫ້ພວກເຮົາຖວາຍຄຳຍ້ອງຍໍພຣະອົງ, ພຣະອົງຊົງສັດຊື່ຕໍ່ພວກເຮົາຫຼາຍຈົນວ່າພວກເຮົາຄວນເຮັດຕາມຄຳປະຕິຍານທີ່ພວກເຮົາໄດ້ເຮັດຕໍ່ພຣະອົງ. ພວກເຮົາເຊື່ອວ່າພຣະເຈົ້າມີເວລາພໍທີ່ຢາກໄດ້ຍິນຄຳອະທິຖານຂອງພວກເຮົາ. ໃນຂນະທີ່ພວກເຮົາອະທິຖານດ້ວຍຄວາມກັງວົນຫຼາຍຢ່າງ. ດາວິດໄດ້ເຕືອນພວກເຮົາວ່າພວກເຮົາສາມາດອະທິຖານຂໍສຳລັບການໃຫ້ອະພັຍ. ຂໍ້ນີ້ຊີ້

ໃຫ້ເຫັນເຖິງຄວາມຈຳເປັນສຳລັບການໃຫ້ອະພັຍຂອງພຣະເຈົ້າສຳລັບບາບທີ່ນັບບໍ່ຖ້ວນຂອງພວກເຮົາ. ມະນຸດທຸກຄົນສາມາດເຂົ້າຫາພຣະອົງໄດ້ໂດຍທາງການອະທິຖານ, ບໍ່ວ່າພວກເຂົາຈະຕໍ່ສູ້ແນວໃດກໍຕາມ, ພວກເຂົາສາມາດມາຫາພຣະເຈົ້າດ້ວຍການອະທິຖານ. ດາວິດໄດ້ຂຽນໄວ້ວ່າມະນຸດທັງປວງຈະມາຫາພຣະເຈົ້າ, ຄວາມຄິດນັ້ນອາດແປກໃຈເພາະແມ່ນແຕ່ພຣະເຢຊູຍັງໄດ້ກ່າວວ່າບໍ່ແມ່ນທຸກຄົນຈະໄດ້ພົ້ນ(ມັດທາຍ 7:14). ດາວິດໝາຍຄວາມວ່າແນວໃດເມື່ອເວລາທີ່ເວົ້າວ່າມະນຸດທັງໝົດຈະມາຫາພຣະເຈົ້າ? ອັຄສາວົກໂປໂລໄດ້ໃຫ້ຄວາມໝາຍຊັດເຈນໃນເວລາທີ່ທ່ານຂຽນວ່າທຸກຫົວເຂົ່າຈະກົ້ມລົງ, ແລະທຸກລີ້ນຈະສາລະພາບວ່າພຣະເຢຊູຄຣິດເປັນພຣະເຈົ້າ (ຟີລິບປອຍ 2:10-11). ໃນຂນະທີ່ພວກເຮົາຮູ້ວ່າບໍ່ແມ່ນທຸກຫົວເຂົ່າຈະກົ້ມຂາບລົງຕໍ່ພຣະເຢຊູ, ນັ້ນບໍ່ໄດ້ໝາຍຄວາມວ່າທຸກຄົນຈະບໍ່ໄດ້ຄຸເຂົ່າລົງໃນມື້ນຶ່ງ. ເມື່ອພຣະເຢຊູສະເດັດກັບມາທຸກໆຫົວເຂົ່າຈະສະດຸດລົ້ມລົງຕິດພື້ນແລະທຸກໆລີ້ນຈະຮ້ອງອອກມາ. ທຸກຄົນຈະມີຄວາມຍິນດີທີ່ຈະໄດ້ເຫັນສິ່ງນັ້ນໃນຊີວິດຂອງຕົນຫຼືຍອມຮັບໃຫ້ສາລະພາບຄວາມພ່າຍແພ້ໃນທີ່ສຸດ. ທຸກຄົນຈະເຫັນໄດ້ໃນມື້ນັ້ນພຣະເຈົ້າຢູ່ທີ່ນັ້ນແລະພຣະເຢຊູເປັນພຣະຜູ້ເປັນເຈົ້າ. ເຊັ່ນດຽວກັນກັບໃນສມັຍຂອງດາວິດພວກເຮົາເປັນພຍານຫຼາຍຄົນທີ່ຕໍ່ຕ້ານພຣະເຈົ້າ. ໂດຍບໍ່ເຕັມໃຈທີ່ຈະຍອມຢູ່ໃຕ້ອຳນາດຂອງພຣະອົງ, ພວກເຮົາທຸກຄົນກະບົດຕໍ່ພຣະເຈົ້າແລະເລືອກທາງຂອງເຮົາເອງ. ໃນບາບຂອງພວກເຮົາແລະຄວາມຊົ່ວຮ້າຍທີ່ຢູ່ອ້ອມຮອບຕົວພວກເຮົາ, ສະພາບຂອງຄວາມບໍ່ຊອບທັມສາມາດຮູ້ສຶກເຖິງຄວາມພ່າຍແພ້. ມັນຮຽກຮ້ອງໃຫ້ສຳຫຼວດກວດເບິ່ງໃຫ້ເລິກເຊິ່ງເພື່ອເບິ່ງວ່າໂລກນີ້ໄດ້ແຕກຫັກຍ້ອນການກະບົດຕໍ່ພຣະເຈົ້າທີ່ບໍ່ສາມາດຄາດຄິດໄດ້. ມີສິ່ງໃດບໍ່ທີ່ສາມາດປົກປິດບາບໄດ້ແດ່? ມີຄວາມຫັວງສຳລັບການຕໍ່ສູ້ຂອງພວກເຮົາບໍ? ມີສິ່ງໃດທີ່ສາມາດປິດຊ່ອງຫວ່າງຄວາມບາບທີ່ແຍກພວກເຮົາອອກຈາກພຣະເຈົ້າໄດ້ (ເອຊາຢາ 59:2)? ດາວິດໃຫ້ຄຳຕອບ. ມີພຽງແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດ “ຊົດໃຊ້ແທນສຳລັບການກະບົດຂອງພວກເຮົາ.” ຄຳວ່າ “ຊົດໃຊ້ແທນ” ມີຄວາມໝາຍວ່າ “ປົກປິດ.” ການຊົດໃຊ້ແທນອັນນີ້ແມ່ນຫຼາຍກ່ວາການເຊື່ອງຊ້ອນໄວ້ໃຕ້ຜ້າພົມ. ຮອຍເປື້ອນຖືກແກ້ໄຂ. ຂໍ້ບັນທຶກຖືກລຶບລ້າງ, ຄວາມເມດຕາດັ່ງກ່າວທີ່ມາຈາກພຣະເຈົ້າຄວນເຮັດໃຫ້ຫົວໃຈເປີດອອກດ້ວຍຄວາມກະຕັນຍູຕໍ່ພຣະເຈົ້າຜູ້ໃຫ້ອະພັຍເຮົາຢ່າງເລິກເຊິ່ງ. ການໃຫ້ອະພັຍຂອງພຣະເຈົ້າຍິ່ງໃຫ່ຍຫຼາຍກວ່າສິ່ງທີ່ພຣະອົງເຮັດເພື່ອກຳຈັດສິ່ງທີ່ບໍ່ດີ. ແທ້ຈິງແລ້ວ, ພຣະອົງໄດ້ນຳພາພວກເຮົາເຂົ້າໄປໃນບາງສິ່ງບາງຢ່າງທີ່ຮຸ່ງເຮືອງ. ເຖິງແມ່ນວ່າຜາສາດຂອງພຣະອົງ, ພວກເຮົາກໍ່ສາມາດອາສັຍຢູ່ໃນທີ່ນັ້ນໄດ້ກັບພຣະອົງ. ພວກເຮົາມີປະສົບການກັບມັນໃນບາງສ່ວນໃນເວລານີ້ໂດຍການເດີນໄປກັບພຣະອົງ, ແຕ່ພວກເຮົາຈະຮູ້ຢ່າງເຕັມທີ່ໃນມື້ນຶ່ງເມື່ອພວກເຮົາຢູ່ກັບພຣະອົງຊົ່ວນິລັນດອນ, ໃນທີ່ປະທັບຂອງພຣະອົງ, ພວກເຮົາຈະພໍໃຈໃນຄວາມດີຂອງຜູ້ທີ່ພຣະອົງຊົງເປັນແລະສິ່ງທີ່ພຣະອົງໄດ້ເຮັດ. ພຣະອົງຂັບໄລ່ສິ່ງທີ່ບໍ່ດີທັງໝົດໃນທີ່ປະທັບຂອງພຣະອົງ, ແລະສິ່ງທີ່ດີທັງປວງກໍເປັນສຸກ, ໃນທີ່ສຸດ, ພຣະເຈົ້າຈະລະງັບຄວາມປາຖນາຂອງຈິດວິນຍານຂອງພວກເຮົາ. ຄວາມຈິງທີ່ວ່າການປະທັບຂອງພຣະອົງຖືກອະທິບາຍວ່າບໍຣິສຸດໝາຍຄວາມວ່າມັນຖືກແຍກອອກຈາກປະສົບການອື່ນໆ. ບໍ່ມີໃຜຄືພຣະອົງ. ຈະບໍ່ມີສິ່ງໃດເໝືອນກັບການຢູ່ໃນທີ່ປະທັບຕລອດໄປຂອງພຣະອົງ. ພວກເຮົາທີ່ກະບົດຈະມີຄວາມສຸກກັບຂອງຂວັນແບບນັ້ນໄດ້ຢ່າງໃດ? ເພາະວ່າພຣະເຈົ້າເຕັມໃຈທີ່ຈະໃຫ້ອະພັຍພວກເຮົາ. ຂອງຂວັນດັ່ງກ່າວບໍ່ສາມາດຈ່າຍຄືນໄດ້. ບໍ່ມີຫັຽງທີ່ທ່ານສາມາດເຮັດໃຫ້ເທົ່າທຽມກັນໄດ້. ມັນແມ່ນໂດຍພຣະຄຸນຂອງພຣະອົງ. ຂນະທີ່ເຮົາບໍ່ສາມາດຈ່າຍຄືນໃຫ້ພຣະອົງ, ເຮົາກໍ່ສາມາດສະແດງຄວາມກະຕັນຍູຂອງພວກເຮົາໄດ້.

## 2. ເພງສັນລະເສີນ 65:5-8

*5. ຂ້າແດ່ພຣະຜູ້ເປັນເຈົ້າແຫ່ງຄວາມພົ້ນຂອງພວກຂ້ານ້ອຍ ພຣະອົງຊົງຕອບພວກຂ້ານ້ອຍ ແລະຊົງຊ່ອຍພວກຂ້ານ້ອຍໃຫ້ພົ້ນພັຍ*
*ດ້ວຍການອັສຈັນ ປະຊາຊົນທຸກຄົນຢູ່ໃນໂລກນີ້ ແລະຢູ່ຟາກນໍ້າທະເລທີ່ໄກອອກໄປ ກໍເຊື່ອໄວ້ວາງໃຈໃນພຣະອົງ. 6. ພຣະອົງຊົງຕັ້ງ*
*ພູທັງຫຼາຍໄວ້ເປັນບ່ອນ ດ້ວຍອຳນາດອັນຍິ່ງໃຫຍ່ຂອງພຣະອົງ. 7. ພຣະອົງຊົງເຮັດໃຫ້ສຽງສະໜັ່ນຫວັ່ນໄຫວຂອງຄື້ນນໍ້າງຽບລົງ*
*ແລະຊົງເຮັດໃຫ້ສຽງອຶກກະທຶກຂອງປະຊາຊົນມິດງຽບ. 8. ຍ້ອນການຍິ່ງໃຫຍ່ທີ່ພຣະອົງໄດ້ຊົງກະທຳ ທົ່ວທັງໂລກນີ້ຈຶ່ງຢຳເກງ ກິຈ*
*ການຂອງພຣະອົງນຳເອົາສຽງໂຫ່ຮ້ອງຍິນດີ ແຕ່ແຜ່ນດິນໂລກເບື້ອງຕາເວັນອອກຈົນເຖິງເບື້ອງຕາເວັນຕົກ.*

ນອກເໜືອໄປຈາກການໃຫ້ອະພັຍຂອງພຣະເຈົ້າແລ້ວ, ພວກເຮົາມີເຫດຜົນທີ່ຈະຂອບພຣະຄຸນສຳລັບຄວາມຍິ່ງໃຫ່ຍແລະຣິດເດດ

ອັນຍິ່ງໃຫຍ່ຂອງພຣະອົງ. ໃນເພງສັນລະເສີນ 65:2 ດາວິດໄດ້ບອກໃຫ້ຮູ້ວ່າພຣະເຈົ້າຟັງຄຳອະທິຖານຂອງພວກເຮົາຢູ່. ເມື່ອພວກເຮົາທູນຂໍພຣະອົງ, ພຣະອົງໄດ້ເປີດເຜີຍຄວາມສາມາດທີ່ບໍ່ມີທີ່ທຽບໄດ້ຂອງພຣະອົງເພື່ອແກ້ໄຂຄວາມກັງວົນຂອງພວກເຮົາດ້ວຍຄວາມຈິງໃຈແລະຄວາມຕັ້ງໃຈ, ພວກເຮົາຮ້ອງຫາແລະພຣະອົງໄດ້ຕອບ-ແລະເມື່ອພຣະອົງຕອບ, ພວກເຮົາໄດ້ຍິນພຣະອົງຢ່າງຊັດເຈນ, ສິ່ງທີ່ພວກເຮົາທູນຂໍບໍ່ເປັນຄວາມຫຍຸ້ງຍາກຕໍ່ພຣະອົງທີ່ບໍ່ສາມາດແກ້ໄຂ. ດາວິດຂຽນວ່າຄຳຕອບຂອງພຣະເຈົ້າຕໍ່ຄຳອະທິຖານຂອງພວກເຮົາແມ່ນອີງໃສ່ຄວາມຊອບທັມ. ພຣະເຈົ້າບໍ່ເຄີຍຕອບຜິດ, ພຣະເຈົ້າຮູ້ຈັກສິ່ງທີ່ຖືກຕ້ອງ, ແລະພຣະອົງມີອຳນາດເຮັດໃຫ້ຖືກຕ້ອງ. ການທຳງານຂອງພຣະອົງບໍ່ພຽງແຕ່ຖືກຕ້ອງເທົ່ານັ້ນ, ແຕ່ມັນເປັນໜ້າປະທັບໃຈ. ເມື່ອພຣະເຈົ້າເຄື່ອນໄຫວ, ໂລກທັງປວງຈະສັງເກດເຫັນ. ໃນປວັດສາດ. ໃນປີທີ່ຜ່ານກາຍມານີ້, ມັນເບິ່ງຄືວ່າຄວາມຕ້ອງການສຳລັບເລື່ອງນີ້ໄດ້ເພີ່ມຂຶ້ນ. ການປ່ຽນແປງຂອງໂລກໄດ້ເຮັດໃຫ້ພວກເຮົາສິ້ນຫັວງ, ມີຄວາມສັບສົນ, ແລະຄວາມຢ້ານກົວຕ່າງໆ. ພວກເຮົາໄວ້ວາງໃຈໃນຄວາມພຍາຍາມຂອງພວກເຮົາຫຼາຍຈົນເຮັດໃຫ້ຕົກຕໍ່າລົງ, ວັນເວລາສ່ວນຕົວແລະລະດັບຊາດເຂົ້າມາຂົ່ມຂູ່ຄວາມປອດພັຍທາງດ້ານຄວາມໝັ້ນຄົງຂອງພວກເຮົາ. ຄວາມຂັດແຍ້ງໃນອີກດ້ານນຶ່ງຂອງໂລກມີນ້ຳໜັກຕໍ່ສະຖານະການຂອງພວກເຮົາ. ເຖິງແມ່ນວ່າຜູ້ຢູ່ໃນສະພາບທາງດ້ານຮ່າງກາຍສູງສຸດກໍ່ຕ້ອງພິຈາລະນາເບິ່ງພັຍຂົ່ມຂູ່ທີ່ບໍ່ເຄີຍເຫັນນັ້ນ. ໂອກາດທີ່ໜ້າປະທັບໃຈໄດ້ເກີດຂຶ້ນຜ່ານຄວາມວຸ້ນວາຍທັງໝົດນີ້: ເວລາເຫຼົ່ານີ້ໄດ້ເຕືອນພວກເຮົາວ່າພວກເຮົາບໍ່ແມ່ນພຣະເຈົ້າ, ພວກເຮົາບໍ່ສາມາດເຮັດສິ່ງໃດທີ່ເປັນໄປບໍ່ໄດ້. ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດເຮັດໄດ້. ທ່າມກາງຄວາມວຸ້ນວາຍເຫຼົ່ານີ້, ພວກເຮົາຈື່ໄດ້ແຫຼ່ງຄວາມຫັວງອັນດຽວທີ່ຮັບປະກັນໄດ້. ພຣະເຈົ້າເປັນພຣະຜູ້ຊ່ອຍໃຫ້ລອດທີ່ຊອບທັມຄົບຖ້ວນ, ມີພະລັງ, ມີພຣະຄຸນ, ສເນີຄວາມຫັວງໃຫ້ກັບໂລກທັງໝົດ, ພະລັງທີ່ບໍ່ມີໃຜທຽບໄດ້ຂອງພຣະອົງເຮັດໃຫ້ພວກເຮົາຕ້ອງການຄວາມໝັ້ນໃຈຢ່າງໜັກໜ່ວງ. ພວກເຮົາສາມາດພັກຜ່ອນໃນພະລັງຂອງພຣະອົງໄດ້ແນວໃດ? ມັນເປັນການຍາກ, ເປັນໄປບໍ່ໄດ້, ທີ່ຈະປີນພູອັນທີ່ພຣະເຈົ້າຊົງສ້າງດ້ວຍຖ້ອຍຄຳຂອງພຣະອົງງ່າຍໆ. ພຣະເຈົ້າບໍ່ພຽງແຕ່ໄດ້ສ້າງພູເຂົາເທົ່ານັ້ນ, ແຕ່ພຣະອົງຍັງໄດ້ສ້າງທະເລ, ພວກເຮົາບໍ່ສາມາດສ້າງມັນໄດ້, ແລະພວກເຮົາບໍ່ສາມາດຮັກສາມັນໄດ້. ແຕ່ເມື່ອພຣະເຈົ້າສັ່ງ, ຄື້ນຟອງໄດ້ຍິນສຽງຂອງພຣະອົງ, ຜູ້ທີ່ຊົງສ້າງກໍ່ສາມາດເຮັດໃຫ້ມັນຄົງຢູ່ໄດ້ຕາມຄວາມຕ້ອງການ. ພຣະເຢຊູໄດ້ພິສູດຕົນເອງວ່າເປັນສຽງຂອງການສ້າງໃນເວລາທີ່ພຣະອົງໄດ້ສງົບຄື້ນແລະຟອງທີ່ເປັນອັນຕລາຍຕໍ່ສາວົກ (ມາຣະໂກ 4:39). ຫູຂອງນ້ຳໄດ້ເງີຍຂຶ້ນ, ແລະຄື້ນໄດ້ສງົບລົງໃນທັນທີທີ່ມັນໄດ້ຍິນສຽງຂອງພຣະອົງ. ພຣະເຈົ້າສາມາດ! ນັ້ນຄືຜູ້ທີ່ພຣະອົງຊົງເປັນ, ຄືກັບພຣະເຈົ້າທີ່ເຮັດນ້ຳສງົບ. ພຣະອົງສາມາດຢຸດການກະບົດທີ່ບໍ່ມີຄວາມສຳຄັນຂອງຊາດໃດນຶ່ງໃນໂລກ. ເມື່ອຄວາມຢ້ານກົວຂອງທ່ານເພີ່ມຂຶ້ນຍ້ອນຄວາມບໍ່ທ່ຽງໝັ້ນຂອງລັດຖະບານ. ຈົ່ງໃສໃຈວ່າ, ພຣະເຈົ້າຂອງພວກເຮົາສາມາດດັບພັຍຂົ່ມຂູ່ຂອງພວກເຂົາ, ແລະໃນວັນນຶ່ງພຣະອົງຈະເຮັດໃຫ້ພວກເຮົາເຫັນເຫດແຫ່ງຄວາມຮູ້ບຸນຄຸນ.

### 3. ເພງສັນລະເສີນ 65:9-13

*9. ພຣະອົງຊົງສົ່ງນ້ຳຝົນລົງມາບຳລຸງຮັກສາພື້ນແຜ່ນດິນ ພຣະອົງຊົງເຮັດໃຫ້ພື້ນແຜ່ນດິນນີ້ຮັ່ງມີ ແລະອຸດົມສົມບູນນ້ຳຫ້ວຍທີ່ພຣະອົງຊົງປະທານໃຫ້ນັ້ນກໍບໍ່ເຫືອດແຫ້ງຈັກເທື່ອ ມັນໄດ້ເຮັດໃຫ້ພື້ນແຜ່ນດິນເກີດພືດຜົນ ນີ້ແມ່ນການກະທຳຂອງພຣະອົງ. 10. ພຣະອົງຊົງເຮັດໃຫ້ຝົນຕົກທົດທົ່ງນາທີ່ໄຖແລ້ວຢ່າງພຽງພໍ ພຣະອົງຊົງເຮັດໃຫ້ດິນອ່ອນດ້ວຍຫ່າຝົນແລະຊົງໃຫ້ຕົ້ນກ້າເກີດຂຶ້ນມາ. 11. ຄວາມດີຂອງພຣະອົງຊົງປະທານການເກັບກ່ຽວອັນອຸດົມສົມບູນ ພຣະອົງຊົງສະເດັດໄປບ່ອນໃດ ບ່ອນນັ້ນກໍອຸດົມສົມບູນ. 12. ຕາມທົ່ງຫຍ້າກໍເຕັມໄປດ້ວຍພືດຜົນ ຕາມອ້ອມແອ້ມພູກໍເຕັມໄປດ້ວຍຄວາມມ່ວນຊື່ນ. 13. ຝູງແກະກໍຢູ່ທົ່ວທົ່ງຫຍ້າຕາມຮ່ອມພູເຕັມແຕ່ເຂົ້າບາເລ ພວກເຂົາໂຮຮ້ອງແລະຮ້ອງລຳທຳເພງຢ່າງມ່ວນຊື່ນ.*

ພວກເຮົາສາມາດຂອບໃຈພຣະເຈົ້າທີ່ພຣະອົງບໍ່ໄດ້ປະໃຫ້ພວກເຮົາຢູ່ລຳພັງຕົວເຮົາເອງ. ດາວິດກ່າວວ່າພຣະເຈົ້າເຂົ້າມາຢ້ຽມຢາມແຜ່ນດິນໂລກ. ຄົນຈຳນວນຫຼາຍບໍ່ເຊື່ອໃນພຣະເຈົ້າ, ແຕ່ມີຈຳນວນຫຼວງຫຼາຍເໝືອນກັນທີ່ເຊື່ອໃນພຣະເຈົ້າອົງບໍຣິສຸດ. ໃນຄວາມຄິດຂອງພວກເຂົາ, ພຣະເຈົ້າອາດຊົງສ້າງທຸກສິ່ງ, ແຕ່ພຣະອົງບໍ່ໄດ້ສົນໃຈກັບພວກເຮົາ, ພຣະອົງວຸ້ນວາຍຢູ່ກັບຫຼາຍສິ່ງ, ພຣະອົງຫຍຸ້ງຢູ່ກັບການງານຕລອດເວລາ, ພຣະອົງສົນໃຈກັບຫຼາຍສິ່ງຫຼາຍຢ່າງກ່ວາພວກເຮົາ, ນັ້ນບໍ່ເປັນຄວາມຈິງ. ພຣະເຢຊູໄດ້ເຂົ້າມາໃນໂລກ.

ພຣະອົງໄດ້ເບິ່ງແຍງຄວາມຕ້ອງການຂອງພວກເຮົາ. ເມື່ອພຣະອົງຊົງຊໍາຣະລ້າງດ້ວຍນໍ້າ, ພຣະອົງຊົງຊໍາຣະຢ່າງໝົດສິ້ນ, ພຣະອົງບໍ່ໄດ້ເຮັດພຽງເຄິ່ງນຶ່ງ. ກິຈກັມຂອງພຣະອົງຄືເຮັດໃຫ້ໂລກອຸດົມສົມບູນຂຶ້ນ, ແລະການເຮັດເຊັ່ນນັ້ນ, ພຣະອົງໄດ້ອວຍພຣະພອນຊີວິດຂອງພວກເຮົາຢ່າງບໍ່ມີຂອບເຂດຈໍາກັດ. ເມື່ອພຣະອົງຈັດຫາແຫຼ່ງອາຫານໃຫ້ແກ່ເຮົາ, ພຣະອົງຈຶ່ງເພີ່ມເຕີມສິ່ງທີ່ພວກເຮົາມີຢູ່ນັ້ນໃຫ້ຄົບຖ້ວນສົມບູນ. ເພງສັນລະເສີນ: ບອກພວກເຮົາວ່າພຣະເຈົ້າຈະຕື່ມ, ພຣະອົງຈະກະກຽມ, ແລະພຣະອົງຈະຕອບສນອງ. ເມື່ອພຣະອົງປົກຄຸມແຜ່ນດິນໂລກດ້ວຍຝົນ, ແຜ່ນດິນກໍໄດ້ຮັບອາຫານທີ່ຈໍາເປັນ, ຝົນຕົກລົງມາ, ແລະເມັດພືດກໍ່ງອກງາມຂຶ້ນ. ການຈັດຕຽມຂອງພຣະເຈົ້ານໍາເອົາຊ່ອງທາງທີ່ຈໍາເປັນທີ່ເປັນແຫຼ່ງອາຫານມາໃຫ້, ໂດຍຜ່ານການຜັນແປຂອງດິນຟ້າອາກາດເທິງແຜ່ນດິນໂລກ, ພຣະເຈົ້າໄດ້ເຮັດໃຫ້ມັນເປັນການກະກຽມຝຸ່ນເພື່ອໃຫ້ໂລກທັງໝົດ. ການລ້ຽງດູທັງໝົດຂອງພວກເຮົາແມ່ນຂຶ້ນກັບພຣະເຈົ້າສືບຕໍ່ເຮັດໃຫ້ແຜ່ນດິນໄດ້ຮັບນໍ້າຢູ່ເລື້ອຍໆ. ຄອບຄົວແລະເພື່ອນໆກໍ່ຈະມາເຕົ້າໂຮມກັນຢູ່ທີ່ໂຕະທີ່ມີຄວາມອຸດົມສົມບູນໃນວັນທີ່ເຮົາສເລີມສລອງວັນຂອບພຣະຄຸນແລະວັນກະກຽມໃສ່ວັນຄຣິສມາດ. ສິ່ງທີ່ເຫຼືອຢູ່ໃນເຮືອນຂອງພວກເຮົາຈະເຕືອນພວກເຮົາໃຫ້ຮູ້ວ່ານັ້ນຄືພຣະພອນທີ່ອຸດົມສົມບູນແທ້ໆ. ເມື່ອໃກ້ຈະໝົດປີແລ້ວ, ພວກເຮົາຈະເຫັນວ່າພຣະເຈົ້າໄດ້ໃຫ້ລາງວັນໃນປະຕິທິນຜ່ານໄປອີກປີນຶ່ງດ້ວຍຄວາມດີຂອງພຣະອົງ. ເມື່ອດາວິດຂຽນເພງນະມັສການນີ້, ດາວິດໄດ້ສລຸບດ້ວຍສຽງຮ້ອງບາງຄົນ, ທ່ານເນັ້ນໜັກວ່າບ່ອນທີ່ເປັນປ່າແຫ້ງແລ້ງຂອງຖິ່ນແຫ້ງແລ້ງກັນດານສາມາດຖືກຫັນປ່ຽນໄປສູ່ແຫຼ່ງທີ່ມີນໍ້າອຸດົມສົມບູນ, ເນີນພູສະແດງໃຫ້ເຫັນຄວາມສຸກທີ່ໜ້າປລາດໃຈກ່ຽວກັບມັນ, ໃນຂນະທີ່ອັນຕລາຍກໍາລັງຂົ່ມຂູ່ຝູງແກະ, ແຕ່ແກະຍັງເຕັມທົ່ງຫຍ້າ. ແມ່ນແຕ່ຮ່ອມພູຍັງຜລິດເມັດພືດສໍາລັບຄວາມມ່ວນຊື່ນຂອງມັນ, ແລະສິ່ງທີ່ຊົງສ້າງທັງໝົດເຫຼົ່ານີ້ເຮັດຫຍັງແດ່? “ພວກເຂົາໂຫ່ຮ້ອງດ້ວຍຊັຍຊະນະ; ແທ້ຈິງແລ້ວ, ພວກເຂົາຮ້ອງເພງ.” ເມື່ອທ່ານເບິ່ງການຊົງສ້າງ, ທ່ານໄດ້ຍິນເພງຂອງມັນບໍ່? ເມື່ອທ່ານເບິ່ງສິ່ງທີ່ພຣະເຈົ້າສ້າງແລະແຫຼ່ງທີ່ມາຂອງຂໍ້ມູນຊີວິດຂອງພວກເຮົາ, ທ່ານໄດ້ຍິນສຽງເພງສັນລະເສີນບໍ່? ມັນເປັນການປະກາດເຖິງຄວາມດີທີ່ບໍ່ສິ້ນສຸດຂອງພຣະເຈົ້າ, ພວກເຮົາທີ່ເປັນຢູ່ໃນທຸກວັນນີ້ກໍ່ເພາະພຣະອົງໄດ້ຄໍ້າປະກັນ. ມັນເໝາະສົມຢູ່ສເມີທີ່ຈະໄດ້ຂອບພຣະຄຸນສໍາລັບການຕອບສນອງຂອງພຣະເຈົ້າ, ແຕ່ໂອກາດວັນພັກປະຈໍາປີຂອງພວກເຮົາ, ເຊື້ອເຊີນພວກເຮົາໃຫ້ເຮັດບາງສິ່ງໃຫ້ຫຼາຍກວ່ານັ້ນໃນອາທິດນີ້.

## ນໍາໃຊ້ໃນຊີວິດ

ພວກເຮົາມີຫຼາຍສິ່ງຫຼາຍຢ່າງທີ່ຕ້ອງຂອບພຣະຄຸນພຣະເຈົ້າ. ຈົ່ງເລືອກຂໍ້ນຶ່ງໃນການນໍາໃຊ້ໃນຊີວິດຕໍ່ລົງໄປນີ້:

- **ການສະທ້ອນສ່ວນຕົວ.** ໃຊ້ບາງເວລາເພື່ອໃຫ້ຮູ້ສະເພາະວ່າເປັນຫຍັງທ່ານຄວນມີຄວາມກະຕັນຍູ. ສໍາຫຼວດເບິ່ງພຣະພອນທີ່ທ່ານໄດ້ເບິ່ງຂ້າມເລື້ອຍໆແລະຂອບໃຈພຣະເຈົ້າສໍາລັບສິ່ງເຫຼົ່ານັ້ນແຕ່ລະອັນ.
- **ການຕັ້ງໃຈໝູນນໍ້າໃຈ.** ຂອງຂັວນອັນຍິ່ງໃຫຍ່ທີ່ສຸດບາງຢ່າງໃນຊີວິດເຮົາແມ່ນບາງຄົນທີ່ພຣະເຈົ້າໄດ້ນໍາເຂົ້າມາອ້ອມຮອບຕົວເຮົາ. ຈົ່ງພິຈາລະນາອະທິຖານເບິ່ງຜູ້ທີ່ອາດສາມາດໃຊ້ການຊູໃຈ. ຈົ່ງບອກກັບເຂົາຕາມວິທີທາງຂອງທ່ານວ່າເປັນຫຍັງທ່ານຈຶ່ງຂອບພຣະຄຸນພຣະເຈົ້າທີ່ໄດ້ນໍາພາລາວເຂົ້າມາໃນຊີວິດຂອງທ່ານ.
- **ການສົນທະນາໃນຄອບຄົວ.** ທ່າມກາງຄວາມວຸ້ນວາຍຂອງວັນຢຸດພັກ, ຈົ່ງຍາດຫາເວລາເພື່ອບອກເຫດຜົນວ່າເປັນຫຍັງຄອບຄົວຂອງທ່ານຈຶ່ງຄວນຂອບໃຈພຣະເຈົ້າ. ໃຊ້ເວລານີ້ໃນຄອບຄົວ, ຍາດພີ່ນ້ອງ, ຫຼືໝູ່ໃຫ້ມາເຕົ້າໂຮມກັນເພື່ອໂອ້ລົມເຫດຜົນທີ່ພວກເຮົາຕ້ອງຂອບໃຈພຣະເຈົ້າ, ໃຊ້ການສົນທະນານີ້ເພື່ອຕໍ່ສູ້ກັບການບໍລິໂພກທີ່ເປັນອັນຕລາຍທີ່ລໍ້ລວງພວກເຮົາໃນຊ່ວງວັນຢຸດພັກ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**